ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໘໗/ປພຖຂ/໐໙໐໗໐໙**

# ຖແລງການ

## ຕອບໂຕ້ນະໂຍບາຍຮຽກຮ້ອງເອົາຄົນລາວຢູ່ຕ່າງປະເທດ

ພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ໄດ້ອອກຖແລງການສບັບນີ້, ເພື່ອຕອບໂຕ້ ນະໂຍບາຍຮຽກຮ້ອງເອົາຄົນລາວຕ່າງສັນຊາດ ກັບຄືນປະເທດ, ໂດຍອ້າງເອົາຜົນປໂຍດ ຂອງຊາດ, ອ້າງເອົາຄວາມສາມະຄີປອງດອງຊາດ ແລະການພັທນາປະເທດ ມາເປັນສາກບັງໜ້ານັ້ນ, ພວກເຮົາເຫັນວ່າ "ນະໂຍບາຍນີ້, ບໍ່ມີຄວາມຈິງໃຈ; ຊ້ອນເຊື່ອງຄວາມເປັນ ຜເດັດການ, ຕົວະຍົວະ ຫລອກລວງ ເອົາຄົນລາວຕ່າງສັນຊາດຢູ່ຕ່າງປະເທດ **ເຂົ້າມາດັບໆຽບ ແລະຫວັງທັບມ້າງການຕໍ່ສູ້ຂອງ ພວກເຮົາ ປະຊາຊົນພັກແລະກຳລັງທັບເສຣີປະຊາທິປະໄຕລາວ ໃຫ້ໝົດໄປ,** ຕາມທິສດີ **ສະນໍ້າອອກຈາກປາ** ນັ້ນເອງ"... ແຕ່ພັກຮັດ ກໍຈະຕ້ອງປຮາໄຊເໝືອນເດີມ, ເພາະພວກເຮົາ ບໍ່ໄດ້ຕໍ່ສູ້ ໃຫ້ນັກທຸຣະກິດການຄ້າ, ນັກລົງທຶນ, ພວກເຮົາ ບໍ່ໄດ້ຕໍ່ສູ້ ໃຫ້ຜູ້ທີ່ຮັ່ງມີ ແລະຜູ້ທີ່ມີອິສຣະພາບທຸກຢ່າງ ທີ່ເຄີຍໄດ້ຢູ່ໃນປະເທດ ຈເຣີນມາແລ້ວ. ພວກເຮົາ ຕໍ່ສູ້ໃຫ້ພໍ່ແມ່ພີ່ນ້ອງປະຊາຊົນລາວ ທີ່ທຸກຍາກລຳບາກ, ຂາດສິດທິເສຣີພາບ ທຸກຢ່າງ ຢູ່ພາຍໃຕ້ນຳນາດຜເດັດການພັກດຽວ ມາເປັນເວລາດົນນານແລ້ວນັ້ນເອງ.

ທ່ານ ຕົງເຢີ ຕໍ ຮອງປະທານແນວລາວສ້າງຊາດ, ສເນີຕໍ່ກອງປະຊຸມສະພາຄັ້ງທີ 7, ໄດ້ເນັ້ນໜັກເຖິງການສ້າງຄວາມສາມະຄີປອງດອງຊາດ, ດ້ວຍການຮຽກຮ້ອງ ເອົາຄົນລາວຕ່າງສັນຊາດ ຢູ່ນຕ່າງປະເທດ ເຂົ້າມາສ້າງສາບ້ານເມືອງ ຕາມແຜນການ ແລະເປົ້າໝາຍ ຂອງພັກປະຊາຊົນປະຕິວັດລາວ ໄດ້ວາງອອກ. ໃນເມື່ອຄົນລາວເຫລົ່ານັ້ນ, ຍິນດີເຂົ້າມາ ຢູ່ໃຕ້ອຳນາດຜເດັດການພັກດຽວ ດ້ວຍຄວາມ

ຕັ້ງໃຈແລ້ວ, **ພັກຣັດ ຈະເອີ້ນວ່າ ສ້າງຄວາມສາມະຄີປອງດອງຊາດ ໄດ້ຢ່າງໃດ?** -ເພາະການສ້າງຄວາມສາມະຄີປອງດອງຊາດທີ່ແທ້ຈິງນັ້ນ, ມີອົງການຈັດຕັ້ງສາກົນ ອູ້ມຊູສນັບສນູນ ແລະຜັກດັນບີບຣັດ ໃຫ້ພັກຣັດເລັ່ງຣີບປະຕິບັດຢູ່ໃນເວລານີ້ ກໍຄື: ໃຫ້ພັກຣັດ ສປປລາວ. ອອກມາໂອ້ລົມກັບພວກເຮົາ ປະຊາຊົນພັກແລະກຳລັງທັບເສຣີປະຊາທິປະໄຕລາວ ຕາມແນວທາງສັນຕິວິທີ. ເຮັດໃຫ້ການປະສານງານຮ່ວມລະຫວ່າງລາວສອງຝ່າຍ ເກີດມີຂຶ້ນໂດຍໄວ, ເພື່ອພ້ອມກັນແກ້ໄຂ ບັນຫາລາວ ທີ່ມີຢູ່ນີ້ ໃຫ້ລຸໂລ່ງໄປໄດ້ດ້ວຍດີ, ເຮັດໃຫ້ ໄຊຊນະ ໃນການແກ້ໄຂບັນຫາລາວ ຄັ້ງຍິ່ງໃຫຍ່ໃນປວັດສາດນີ້, ໃຫ້ເປັນໄຊຊນະລວມ ແລະໝັ້ນຄົງຖາວອນ ຂອງປະຊາຊົນລາວທັງຊາດ. ສັ້ນ, ນະໂຍບາຍນີ້, ນອກຈາກບໍ່ມີຄວາມຈິງໃຈ ແລະເອົາປຽບຄົນລາວຕ່າງສັນຊາດແລ້ວ, ຍັງເປັນ ນະໂຍບາຍ ອຳມະຫິດອີກດ້ວຍ!.

ທ່ານ ຫຽມ ພົມມະຈັນ ຣັຖມົນຕຣີຊ່ວຍວ່າການ ກະຊວງການຕ່າງປະເທດ, ໃນເວລາໃຫ້ສຳພາດວິທຍຸຝຣັ່ງສາກົນ ວັນທີ 6 ສິງຫາ 2009, ທ່ານ ໄດ້ຈອບອອຍ ໃຫ້ຖືເອົາສັນຊາດລາວແຕ່ຢ່າງດຽວ; ດ້ວຍວິທີຫລອກລໍ້ "**ຖາມເອງ-ຕອບເອງ**". ທ່ານເວົ້າວ່າ "**ເອົາສັນຊາດເພື່ອຫຍັງ?... -ເພື່ອກຳມະສິດແມ່ນບໍ? -ເພື່ອທວງເອົາກຳມະສິດເກົ່າຂອງຕົນ** ແລະອື່ນໆອີກ...ໆ! -ທ່ານ ໃຊ້ອຸບາຍ ປ້ອນຄວາມຫວັງໃຫ້ຄົນລາວຕ່າງສັນຊາດ, ເພື່ອຊຸກລົງຫວເທົ່ານັ້ນເອງ!....

ແນ່ນອນ, ການທວງເອົາກຳມະສິດເກົ່າ...ເປັນຕົ້ນ ໄຮ່ນາ, ຮົ້ວສວນ, ບ້ານເຮືອນທີ່ຕົນໄດ້ປະຖິ້ມໄວ້, ເມື່ອໂຕນໜີຈາກປະເທດ, ກໍຕ້ອງ ຂັດຜົນປໂຍດ ຂອງຄນະພັກ ຄນະບັນຊາ ແລະຜູ້ມີອຳນາດອິດທິພົນທີ່ໄດ້ຍຶດເອົາໄປເປັນຂອງຕົນ ໂດຍອ້າງວ່າ "**ເປັນຂອງພວກປະຕິການ!**".

ໃນເມື່ອຕົນໄດ້ປະຖິ້ມສັນຊື່ນໄປແລ້ວ, ສິດທິຄຸ້ມຄອງຈາກປະເທດນັ້ນໆ ກໍຕ້ອງໝົດໄປ; ຕົນ, ມີແຕ່ ປະຕິບັດຕາມກົດໝາຍຂອງພັກຣັດຜເດັດການຢ່າງດຽວ, ກໍຕ້ອງຖືກປັບໃໝໃສ່ໂທດ, ໂດຍອ້າງວ່າ "**ເຂົ້າມາສ້າງບັນຫາໃຫ້ບ້ານເມືອງ**" ດັ່ງນີ້ເປັນຕົ້ນ.

**ອັນນີ້, ແມ່ນເລ້ຫລ່ຽມ ຂອງພັກຣັດ, ເພື່ອຕົວະຍົວະຫລອກລວງ ເອົາຄົນລາວຢູ່ຕ່າງປະເທດເຂົ້າມາປະຕິບັດ ຈັດການ ຕາມແຜນ ດັບງຽບ!.**

ຈະແມ່ນທ່ານ ຕົງເຢີ ຕໍ, ຈະແມ່ນທ່ານ ຫຽມ ພົມມະຈັນ ຫລື ທ່ານ ອ້ວນ ພົມມະຈັກ ທູດລາວປະຈຳປະເທດໄທຍ ທີ່ໄດ້ໃຫ້ສຳພາດພິເສດ ກັບ VOA. ກ່ຽວກັບນະໂຍບາຍ ຮັບເອົາຄົນກັບຄືນປະເທດນັ້ນ, ບໍ່ມີຜູ້ໃດເລີຍ ກ່າວເຖິງການເຄົາຣົບຕໍ່ສິດທິເສຣີພາບ ຂອງຄົນເຊື້ອຊາດລາວ ກັບຄືນປະເທດ ແຕ່ຢ່າງໃດເລີຍ!

ມີແຕ່ ເລັ່ງໃຫ້ປະຕິບັດຕາມກົດໝາຍ ຂອງອຳນາດຜເດັດການແຕ່ຢ່າງດຽວເທົ່ານັ້ນເອງ... ຊຶ່ງມັນຕຣົງກັນຂ້າມ ກັບນະໂຍບາຍຣັຖບານ ທີ່ວ່າ "**ປະເທດລາວ ເປັນຂອງຄົນລາວເຮົາ, ຢາກໃຫ້ທຸກຄົນເປັນເຈົ້າການນຳກັນ**". **ຄົນລາວຕ່າງປະເທດ ກໍມີສິດ ເປັນເຈົ້າການຄືກັນ.** ອັນນີ້, ມັນຕຣົງກັນຂ້າມກັນຢ່າງສິ້ນເຊີງ!.

ເຖິງຢ່າງໃດກໍຕາມ, ພວກເຮົາເຫັນວ່າ ໃນເມື່ອພັກຣັດໄດ້ອອກມາຍອມຮັບຄວາມຫລົ້ມເຫລວໃນການບໍຣິຫານປະເທດຊາດຂອງຕົນ ມາໂດຍຕລອດ, ຍ້ອນຂາດທຶນຮອນ, ຂາດອຸປກອນ ແລະບຸຄລາກອນທີ່ມີຄຸນພາບ ແລະພວກເຮົາ ກໍມີຄວາມສາມາດ ນຳເອົາທຶນຮອນ, ນຳເອົາອຸປກອນ ແລະບຸຄລາກອນ ທີ່ມີຄຸນພາບ ເຂົ້າມາພັທນາປະເທດໄດ້ ຢ່າງພຽງພໍກັບຄວາມຕ້ອງການ... **ຖ້າພັກຣັດ ອອກມາໂອ້ລົມກັບພວກເຮົາ.**

ຖ້າພັກຣັດ ຍຶດໝັ້ນໃນຜົນປໂຍດຂອງຊາດຂອງປະຊາຊົນເປັນຫລັກ ຢ່າງແທ້ຈິງ, ພັກຣັດ ກໍຕ້ອງກ້າອອກມາໂອ້ລົມກັບພວກເຮົາ ກ່ອນທີ່ຈະໝົດໂອກາດ, **ເພາະ ຖ້າພັກຣັດ ບໍ່ຍອມປ່ຽນແປງ ຕາມຄຳຮຽກຮ້ອງຕ້ອງການ ຂອງປະຊາຊົນ, ບໍ່ຍອມປ່ຽນແປງຕາມຂໍ້ສເນີແນະ ຂອງ ທີ່ປຶກສາຕ່າງປະເທດແລ້ວ, ໂລກກໍຈະປ່ຽນແປງ ພວກທ່ານເອງ ໃຫ້ເຂົ້າກັບວິວັທນາການຂອງໂລກ ຢ່າງບໍ່ຕ້ອງສົງສັຍ!.**

ປະຊາຊົນມີໄຊຍ -ເສຣີປະຊາທິປະໄຕອົງອາດ -ຊາດລາວຈົ່ງຈເຣີນ...

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**
**ຫ້ອງການປະທານພັກ**
**ອາຈານ ສົມນຶກ ຟອງສູວັນ**
**ວັນທີ ໐໗ ກັນຍາ ໒໐໐໘.**